ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ສຳນັກງານໃຫຍ່**

ອົງການປະກັນສັງຄົມແຫ່ງຊາດ

ບ້ານ: ທົ່ງສ້າງນາງ

ເມືອງ: ຈັນທະບູລີ

ໂທ: 021 243725

ເລກທີຜູ້ປະກັນຕົນ:…..............................

ເລກທີສັນຍາ.................................../ອປຊ.

ວັນທີ............./.............../……...........

# ສັນຍາການປະກັນຕົນແບບສະໝັກໃຈ

(ໃຊ້ສະເພາະ ອປຊ ແລະ ຜູ້ປະກັນຕົນແບບສະໝັກໃຈ)

## I. ຂໍ້ມູນຂອງຜູ້ປະກັນຕົນແບບສະໝັກໃຈ

ຊື່:...............................,ນາມສະກຸນ:..........................,ວັນ,ເດືອນ,ປີເກີດ:........../........../............,ເລກບັດປະກັນສັງຄົມ:........................

ປະຈຸບັນຢູ່ເຮືອນເລກທີ່ ...........,ໜ່ວຍທີ່:..........,ສຳມະໂນເລກທີ:...............................,ບ້ານ:............................,ເມືອງ:...........................

ແຂວງ/ນະຄອນຫຼວງ:.................................,ໂທລະສັບ:...............................,ຊື່ຫົວໜ່ວຍແຮງງານທີ່ເຮັດວຽກສຸດທ້າຍ:.................................

☐ ສຸຂະພາບແຂງແຮງສາມາດອອກແຮງງານໄດ້; ☐ ສັນຍາຄັ້ງທຳອິດ; ☐ ຕໍ່ສັນຍາ. ເງິນເດືອນປະກັນຕົນຄັ້ງຜ່ານມາ:......................................................

- ➢ ເງິນເດືອນປະກັນຕົນທີ່ເລືອກ:..........................................ກີບ, ລວມຈຳນວນເງິນທີ່ຕ້ອງຈ່າຍທັງໝົດເທົ່າກັບ:............................................ກີບ.
- ➢ ເລີ່ມຈ່າຍປະຈຳເດືອນ:...................... ປີ ........................

## II. ຄວາມຮັບຜິດຊອບຂອງແຕ່ລະຝ່າຍ

1. ອົງການປະກັນສັງຄົມແຫ່ງຊາດ ມີ ໜ້າທີ່:

- ຂຶ້ນທະບຽນ ແລະ ຮັບເງິນສົມທົບຈາກຜູ້ປະກັນຕົນແບບສະໝັກໃຈ;
- ແຈ້ງໃຫ້ຜູ້ປະກັນຕົນແບບສະໝັກໃຈຊາບກ່ຽວກັບການປ່ຽນແປງອັດຕາເງິນສົມທົບ ແລະ ອື່ນໆ;
- ສະໜອງບັນດາປະເພດການອຸດໜູນ ທີ່ໄດ້ກຳນົດໄວ້ໃນກົດໝາຍປະກັນສັງຄົມ, ຍົກເວັ້ນ ອຸດໜູນອຸປະຕິເຫດແຮງງານ ຫຼື ພະຍາດອາຊີບ ແລະ ອຸດໜູນວ່າງງານ.

2. ຜູ້ປະກັນຕົນແບບສະໝັກໃຈ ມີ ໜ້າທີ່:

- ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມເປັນລາຍເດືອນ ຫຼື ງວດ ໃນອັດຕາເງິນສົມທົບທັງໝົດ 9% ຂອງເງິນເດືອນປະກັນຕົນທີ່ໄດ້ເລືອກໄວ້;
- ຈ່າຍເງິນສົມທົບຢ່າງຕໍ່ເນື່ອງ, ເວັ້ນເສຍແຕ່ກໍລະນີໄດ້ຮັບອຸດໜູນນຳ ອປຊ, ເສຍຊີວິດ ຫຼື ມີການຢັ້ງຢືນທີ່ມີເຫດຜົນ;
- ຮັບອຸດໜູນຕ່າງໆ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ.

## III. ການກຳນົດເງື່ອນໄຂອື່ນໆ

1. ຜູ້ສະໝັກໃຈ **ຕ້ອງມາເຮັດສັນຍາດ້ວຍຕົນເອງໃນຄັ້ງທຳອິດ**, ສ່ວນສັນຍາໃນຄັ້ງຕໍ່ໄປທີ່ບໍ່ມີການປ່ຽນແປງລະດັບເງິນເດືອນປະກັນຕົນໃໝ່ ສາມາດໃຫ້ບຸກຄົນອື່ນມາຕໍ່ສັນຍາແທນກໍໄດ້;
2. **ສັນຍາມີອາຍຸ 24 ເດືອນ** ແລະ ຕ້ອງຈ່າຍຄົບອາຍຸສັນຍາ ຈຶ່ງສາມາດປ່ຽນແປງລະດັບເງິນເດືອນປະກັນຕົນໃໝ່ໄດ້ ໂດຍບໍ່ໃຫ້ **ຫລຸດ ຫລື ເພີ່ມ 50%** ຂອງລະດັບເງິນເດືອນປະກັນຕົນທີ່ເລືອກຜ່ານມາ; ສຳລັບຜູ້ສະໝັກໃຈທີ່ເລີ່ມເຂົ້າປະກັນຕົນໃໝ່ ສາມາດເລືອກເງິນປະກັນຕົນໄດ້ສູງສຸດບໍ່ເກີນ 60% ຂອງເພດານເງິນປະກັນຕົນສູງສຸດທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ;
3. ຜູ້ສະໝັກໃຈ ສາມາດຈ່າຍເງິນສົມທົບລ່ວງໜ້າໃນຂອບເຂດອາຍຸຂອງສັນຍາໄດ້ ແຕ່ການເກີດສິດແມ່ນຈະໄດ້ຮັບຕາມເດືອນສົມທົບປະຈຸບັນເທົ່ານັ້ນ, ຖ້າໝົດສັນຍາ ແລະ ມີການປະລະໄລຍະຫ່າງຂອງສັນຍາ ***ເກີນ ສາມເດືອນ*** ແມ່ນໃຫ້ເລີ່ມສັນຍາໃໝ່ໃນເດືອນປະຈຸບັນທີ່ຢູ່ ແລະ ບໍ່ມີສິດຈ່າຍຍ້ອນຫລັງໄດ້, ສຳລັບຜູ້ທີ່ຄ້າງຈ່າຍ ຕ້ອງຊຳລະສັນຍາເກົ່າໃຫ້ຄົບກ່ອນ ແລ້ວຈຶ່ງເລີ່ມເຮັດສັນຍາໃໝ່ໃນເດືອນປະຈຸບັນທີ່ຢູ່ເປັນຕົ້ນໄປ;
4. ຜູ້ສະໝັກໃຈ ທີ່ມີການປ່ຽນແປງຂໍ້ມູນໃໝ່ ຕ້ອງແຈ້ງໃຫ້ ອປຊ ຊາບໂດຍດ່ວນ ເພື່ອຮັບປະກັນການເກີດສິດຮັບອຸດໜູນທີ່ຖືກຕ້ອງ;
5. **ຜູ້ສະໝັກໃຈ ທີ່ແຈ້ງຂໍ້ມູນອັນເປັນເທັດ ຫລື ປອມແປງເອກະສານ ເພື່ອຮ້ອງຂໍອຸດໜູນປະເພດຕ່າງໆ, ຖ້າ ອປຊ ກວດພົບ ມີສິດສັ່ງໂຈະ ຫລື ລົບລ້າງການອຸດໜູນດັ່ງກ່າວ ແລະ ມີສິດຮຽກເກັບເງິນຄືນ ຫາກມີການເບີກຈ່າຍອຸດໜູນໄປແລ້ວ ພ້ອມທັງດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ;**
6. ການເສຍອົງຄະ-ພິການ ກ່ອນເຂົ້າເປັນສະມາຊິກຂອງອົງການປະກັນສັງຄົມແຫ່ງຊາດ ຈະບໍ່ຖືເປັນເງື່ອນໄຂໃນການພິຈາລະນາອຸດໜູນເສຍກຳລັງແຮງງານຕາມກົດໝາຍ;
7. ສັນຍາຈະສິ້ນສຸດລົງໃນກໍລະນີ: ຜູ້ປະກັນຕົນແບບສະໝັກໃຈຫາກໄດ້ຮັບອຸດໜູນໄລຍະຍາວ, ແຈ້ງຢຸດເຊົາສັນຍາ ຫລື ໄດ້ກັບຄືນເຂົ້າເປັນຜູ້ປະກັນຕົນນຳຫົວໜ່ວຍແຮງງານ ທີ່ເປັນສະມາຊິກຂອງ ອປຊ.
8. ສັນຍາສະບັບນີ້ເລີ່ມແຕ່ວັນທີ................../................/.................. ແລະ ສິ້ນສຸດໃນວັນທີ................./..................../..................

| ຊື່ແຈ້ງ ແລະ ລາຍເຊັນຜູ້ສະໝັກໃຈ | ພະແນກ ທະບຽນ-ເງິນສົມທົບ | ຫົວໜ້າອົງການປະກັນສັງຄົມແຫ່ງຊາດ |
|---|---|---|

ໝາຍເຫດ : ເອກະສານທີ່ຕິດຄັດໃບສັນຍາປະກອບດ້ວຍ

- ໃບຢັ້ງຢືນທີ່ຢູ່
- ສຳເນົາບັດປະກັນສັງຄົມ (ຖ້າມີ)
- ສຳເນົາບັດປະຈຳຕົວ
- ສຳເນົາປື້ມສຳມະໂນຄົວ
- ເອກະສານອື່ນໆທີ່ກ່ຽວຂ້ອງ